ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສໍານັກງານນາຍົກລັດຖະມົນຕີ ເລກທີ..354..../ນຍ

ນະຄອນຫຼວງວຽງຈັນ,ວັນທີ05.10.2007.

# ດໍາລັດ

## ວ່າດ້ວຍເລກປະຈໍາຕົວຜູ້ເສຍອາກອນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003 ;
- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19/05/2005 ;
- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ, ລົງວັນທີ 26/12/2006 ;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1435/ກງ, ລົງວັນທີ 19/06/2007.

## ນາຍົກລັດຖະມົນຕີ ອອກດໍາລັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫລັກການ, ລະບຽບການ, ວິທີການ ແລະມາດຕະການ ກ່ຽວກັບການນໍາໃຊ້ເລກປະຈໍາຕົວຜູ້ເສຍອາກອນ ເພື່ອເຮັດໃຫ້ການຄຸ້ມຄອງຖານຂໍ້ມູນຂ່າວສານຈາກການດໍາເນີນທຸລະກິດ ຫລື ການປະກອບອາຊີບຕ່າງໆຂອງຜູ້ເສຍອາກອນມີຄວາມຊັດເຈນ, ທັນສະໄໝ ແລະມີປະສິດທິພາບສູງ ແລະຮັບປະກັນການເກັບລາຍຮັບສ່ວຍສາອາກອນ ໃຫ້ຖືກຕ້ອງ ແລະຄົບຖ້ວນ ຕາມລະບຽບກົດໝາຍກໍານົດໄວ້.

**ມາດຕາ 2. ເລກປະຈຳຕົວຜູ້ເສຍອາກອນ**

ເລກປະຈຳຕົວຜູ້ເສຍອາກອນ ແມ່ນເລກລະຫັດທີ່ໃຊ້ສະເພາະກັບຜູ້ມີພັນທະເສຍອາກອນໃຫ້ລັດ ເພື່ອສາມາດຄຸ້ມຄອງ ແລະຕິດຕາມຂໍ້ມູນຕ່າງໆຂອງຜູ້ເສຍອາກອນໄດ້.

**ມາດຕາ 3. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ລວມທັງຊາວຕ່າງປະເທດ ທີ່ດຳເນີນທຸລະກິດ ຫລື ທຳມາຫາກິນຖາວອນ ຫລື ຊົ່ວຄາວ ຢູ່ ສປປ ລາວ ກໍຄືຜູ້ມີພູມລຳເນົາ ຫລື ສະຖານທີ່ດຳເນີນທຸລະກິດຢູ່ລາວ ໄປເຄື່ອນໄຫວຢູ່ຕ່າງປະເທດທີ່ມີລາຍໄດ້.

## ໝວດທີ II

### ອົງປະກອບເລກປະຈຳຕົວຜູ້ເສຍອາກອນ

**ມາດຕາ 4. ອົງປະກອບເລກປະຈຳຕົວຜູ້ເສຍອາກອນ**

ເລກປະຈຳຕົວຜູ້ເສຍອາກອນ ປະກອບດ້ວຍ 4 ພາກສ່ວນຄື :

- ພາກສ່ວນທີ່ໜຶ່ງ ແມ່ນເລກນັບຕາມລຳດັບ ມີ 8 ໂຕເລກ ເພື່ອກຳນົດຈຳນວນຜູ້ເສຍອາກອນໂດຍລຽງຕາມລຳດັບ;
- ພາກສ່ວນທີ່ສອງ ແມ່ນເລກກວດກາ ມີ 1 ໂຕເລກ ໃຊ້ເພື່ອກວດສອບເລກໝາຍດັ່ງກ່າວດ້ວຍລະບົບຄອມພິວເຕີ ກ່ຽວກັບຜູ້ເສຍອາກອນ ເພື່ອປ້ອງກັນຄວາມຜິດພາດໃນເວລາປ້ອນຂໍ້ມູນຂອງຜູ້ເສຍອາກອນເຂົ້າເຄື່ອງຄອມພິວເຕີ;
- ພາກສ່ວນທີ່ສາມ ແມ່ນສຳລັບຜູ້ເສຍອາກອນທີ່ໄດ້ຂຶ້ນທະບຽນຢູ່ໃນລະບົບອາກອນມູນຄ່າເພີ່ມ ຊຶ່ງກຳນົດເອົາເລກ 9 ຕໍ່ຈາກໂຕເລກກວດກາ, ສຳລັບຜູ້ທີ່ບໍ່ໄດ້ເຂົ້າໃນລະບົບອາກອນມູນຄ່າເພີ່ມ ແມ່ນກຳນົດເອົາເລກ 0;
- ພາກສ່ວນທີ່ສີ່ ແມ່ນເລກປະຈຳຕົວສຳລັບສາຂາ ຂອງວິສາຫະກິດທີ່ຕັ້ງຢູ່ແຕ່ລະທ້ອງຖິ່ນ ໂດຍກຳນົດເອົາ 2 ໂຕເລກ, ສຳລັບວິສາຫະກິດທີ່ບໍ່ມີສາຂາ ແມ່ນກຳນົດເອົາ 00 ແທນ. ສາຂາ ແມ່ນໝາຍເຖິງສຳນັກງານຖາວອນຂອງວິສາຫະກິດ ທີ່ຕັ້ງຢູ່ທ້ອງຖິ່ນ ຫລື ແຂວງອື່ນ.

| ກກກກກກກກ ຂ - 9ຄຄ. |
|---|

ມາດຕາ 5. ການນຳໃຊ້ເລກປະຈຳຕົວຜູ້ເສຍອາກອນ

ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນທຸລະກິດການຜະລິດ ແລະການບໍລິການ, ບຸກຄົນປະກອບວິຊາຊີບທີ່ມີລາຍໄດ້, ອົງການຈັດຕັ້ງລັດບໍລິຫານ-ວິຊາການ ແລະອົງການຈັດຕັ້ງສັງຄົມອື່ນໆ ລ້ວນແຕ່ແມ່ນເປົ້າໝາຍໃຫ້ນຳໃຊ້ເລກປະຈຳຕົວຜູ້ເສຍອາກອນ.

ຜູ້ມີພັນທະເສຍອາກອນ ຕ້ອງນຳໃຊ້ເລກປະຈຳຕົວຂອງຕົນ ເຂົ້າໃນ ໃບທະບຽນອາກອນ, ໃບແຈ້ງເສຍອາກອນ, ໃບເກັບເງິນ, ເອກະສານຊຳລະອາກອນ, ເອກະສານແຈ້ງພາສີ, ເອກະສານການບັນຊີ, ເອກະສານການເຄື່ອນຍ້າຍສິນຄ້າ ເຄື່ອງຂອງ ຫລື ຜະລິດຕະພັນ ແລະເອກະສານອື່ນໆໃນທາງລັດຖະການ.

ຜູ້ມີພັນທະເສຍອາກອນ ໝາຍເຖິງອົງການຈັດຕັ້ງ, ບຸກຄົນ ຫລື ນິຕິບຸກຄົນ ແມ່ນມີສິດໄດ້ຮັບອະນຸຍາດໃຫ້ນຳໃຊ້ເລກປະຈຳຕົວໄດ້ພຽງເລກໝາຍດຽວຕະຫລອດໄລຍະການດຳເນີນທຸລະກິດ ຫລື ການຄົງຕົວຂອງຜູ້ເສຍອາກອນ ໂດຍບໍ່ໃຫ້ປ່ຽນແປງ. ໃນກໍລະນີມີການຢຸດເຊົາທຸລະກິດຖາວອນ, ການໂຮມ ຫລື ການແຍກກິດຈະການ, ຜູ້ເສຍອາກອນເສຍຊີວິດ, ທຸລະກິດລົ້ມລະລາຍ ດັ່ງນີ້ເປັນຕົ້ນ ເລກປະຈຳຕົວດັ່ງກ່າວນັ້ນ ຈະບໍ່ໄດ້ເອົາມານຳໃຊ້ຄືນໃໝ່.

## ໝວດທີ III
## ຂັ້ນຕອນການອອກເລກປະຈຳຕົວຜູ້ເສຍອາກອນ

ມາດຕາ 6. ການຂຶ້ນບັນຊີລາຍຊື່ ຜູ້ເສຍອາກອນ

ຂະແໜງສ່ວຍສາອາກອນແຕ່ລະຂັ້ນຕ້ອງຂຶ້ນບັນຊີລາຍຊື່ຜູ້ເສຍອາກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຫຼັງຈາກນັ້ນ ຕ້ອງໄດ້ສົ່ງເອກະສານລາຍງານກ່ຽວກັບຂໍ້ມູນການຂຶ້ນບັນຊີລາຍຊື່ຜູ້ເສຍອາກອນນັ້ນ ໃຫ້ກົມສ່ວຍສາອາກອນເພື່ອອອກເລກປະຈຳຕົວໃຫ້ແກ່ຜູ້ເສຍອາກອນ ລວມສູນຢູ່ບ່ອນດຽວ .

ມາດຕາ 7. ການອອກເລກປະຈຳຕົວຜູ້ເສຍອາກອນ

ການອອກເລກປະຈຳຕົວຜູ້ເສຍອາກອນ ແມ່ນກົມສ່ວຍສາອາກອນເທົ່ານັ້ນ ເປັນຜູ້ກຳນົດອອກໃຫ້, ຫ້າມບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທຸກພາກສ່ວນຂຶ້ນບັນຊີລາຍຊື່, ອອກເລກປະຈຳຕົວຜູ້ເສຍອາກອນເອົາເອງ ແລະ ມອບເລກປະຈຳຕົວຂອງຕົນໃຫ້ຜູ້ອື່ນນຳໃຊ້ເດັດຂາດ.

ມາດຕາ 8. ວິທີການອອກເລກປະຈຳຕົວຜູ້ເສຍອາກອນ

ກົມສ່ວຍສາອາກອນ ເປັນຜູ້ສ້າງຕັ້ງໜ່ວຍງານຮັບຜິດຊອບໃນການອອກເລກປະຈຳຕົວຜູ້ເສຍອາກອນ, ແລະສ້າງແບບຟອມໃນການອອກເລກປະຈຳຕົວຜູ້ເສຍອາກອນຢູ່ໃນຮູບແບບອີເລັກໂທຣນິກ ເພື່ອສະດວກໃຫ້ແກ່ການນຳໃຊ້, ຄວບຄຸມ ແລະການອອກເລກປະຈຳຕົວຜູ້ເສຍອາກອນ ດ້ວຍລະບົບຄອມພິວເຕີ.

ມາດຕາ 9. ການອອກໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ

ຫົວໜ້າລັດຖະການສ່ວຍສາອາກອນແຕ່ລະຂັ້ນ ເປັນຜູ້ອອກໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ບົນພື້ນຖານເລກປະຈຳຕົວທີ່ກົມສ່ວຍສາອາກອນກຳນົດໃຫ້.

ມາດຕາ 10. ການບັນຈຸຂໍ້ມູນເຂົ້າໃນໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ

ໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ ຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍຂອງຜູ້ເສຍອາກອນດັ່ງນີ້ :

- ເລກປະຈຳຕົວຜູ້ເສຍອາກອນ;
- ຊື່ ແລະ ທີ່ຢູ່ ຫຼື ບ່ອນຕິດຕໍ່ພົວພັນໄດ້ງ່າຍ;
- ວັນ, ເດືອນ, ປີ ອອກເລກປະຈຳຕົວຜູ້ເສຍອາກອນ;
- ຮູບແບບ ນິຕິບຸກຄົນ ຫຼື ບຸກຄົນ;
- ຂະແໜງການທຸລະກິດ ( ຂະແໜງການຕົ້ນຕໍ ໃນກໍລະນີເປັນທຸລະກິດເຄື່ອນໄຫວຫລາຍກິດຈະການ );
- ເລກທີໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ;
- ປະເພດອາກອນທີ່ຕ້ອງເສຍ.
- ຊື່ ແລະທີ່ຢູ່ລະອຽດ ຂອງບຸກຄົນທີ່ເປັນຜູ້ຕາງໜ້າ ( ຖ້າມີ )

ຖ້າຫາກມີການປ່ຽນແປງຂໍ້ມູນຕ່າງໆ ທີ່ໄດ້ຂຶ້ນທະບຽນຜ່ານມາແລ້ວ ຜູ້ເສຍອາກອນຕ້ອງແຈ້ງການປ່ຽນແປງດັ່ງກ່າວຕາມໃບຢັ້ງຢືນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງດຳລັດສະບັບນີ້ ແລ້ວຂະແໜງສ່ວຍສາອາກອນທີ່ຄຸ້ມຄອງຕ້ອງປັບປຸງຂໍ້ມູນຜູ້ເສຍອາກອນນັ້ນໃຫ້ທັນການ.

## ໝວດທີ IV
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11. ການປະຕິບັດມາດຕະການຕໍ່ຜູ້ນໍາໃຊ້ເລກປະຈໍາຕົວຜູ້ເສຍອາກອນ**

ຜູ້ມີພັນທະເສຍອາກອນທີ່ມີເລກປະຈໍາຕົວ ແຕ່ບໍ່ນໍາໃຊ້ເລກປະຈໍາຕົວຂອງຕົນເຂົ້າໃນເອກະສານຕ່າງໆ, ບໍ່ລາຍງານການປ່ຽນແປງຂໍ້ມູນຕ່າງໆຂອງຜູ້ເສຍອາກອນ ຕາມກໍານົດເວລາ, ນໍາໃຊ້ເລກປະຈໍາຕົວຜູ້ເສຍອາກອນປອມ ຫຼື ສວຍໃຊ້ເລກປະຈໍາຕົວຜູ້ເສຍອາກອນຂອງຜູ້ອື່ນ ຄັ້ງທີ່ໜຶ່ງຈະຖືກສຶກສາອົບຮົມ ແລະກ່າວເຕືອນ, ຄັ້ງທີ່ສອງ ແລະຄັ້ງຕໍ່ໆໄປ ຈະຖືກປັບໃໝ ຫລື ດໍາເນີນຄະດີເປັນແຕ່ລະກໍລະນີໜັກ ຫລື ເບົາ ຕາມທີ່ກົດໝາຍກໍານົດໄວ້.

**ມາດຕາ 12. ການປະຕິບັດມາດຕະການຕໍ່ພະນັກງານສ່ວຍສາອາກອນ**

ພະນັກງານສ່ວຍສາອາກອນ ຫາກສວຍໃຊ້ໜ້າທີ່ ຕໍາແໜ່ງ ເພື່ອກັກເອກະສານກ່ຽວກັບເລກປະຈໍາຕົວຜູ້ເສຍອາກອນ , ບໍ່ຂຶ້ນບັນຊີລາຍຊື່ ແລະບໍ່ອອກເລກປະຈໍາຕົວໃຫ້ຜູ້ເສຍອາກອນ ຈະຖືກປະຕິບັດວິໄນເປັນແຕ່ລະກໍລະນີ ຕາມທີ່ລະບຽບກົດໝາຍກໍານົດໄວ້.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 13. ການຈັດຕັ້ງປະຕິບັດ**

ກະຊວງການເງິນມີໜ້າທີ່ເປັນເຈົ້າການ ຈັດຕັ້ງປະຕິບັດດໍາລັດສະບັບນີ້. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ມີໜ້າທີ່ຊີ້ນໍາ ນໍາພາ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ ແລະໃຫ້ໄດ້ຮັບຜົນສໍາເລັດ.

ຂະແໜງສ່ວຍສາອາກອນມີໜ້າທີ່ຮັບຜິດຊອບປ່ຽນແທນເລກປະຈໍາຕົວວິສາຫະກິດທີ່ໄດ້ອອກໃຫ້ບັນດາຫົວໜ່ວຍທຸລະກິດໃນເມື່ອກ່ອນ ດ້ວຍເລກປະຈໍາຕົວຜູ້ເສຍອາກອນຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

**ມາດຕາ 14. ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ